ເທີດທູລຊາດ ເສຣີພາພລາວ ຕລອດການ

ລາວຮ່ວມເສຣີພາພ

LAO UNITED FREEDOM ORGANIZATION

# ການເມືອງ

# ວຽດ-ລາວ

# ພາກ III

ລາວຮ່ວມເສຣີພາພ ປີທີ ໑໗ ສະບັບທີ ໑໔໓ ອອກເດືອນ ມະກະຣາ-ກຸມພາ, ປີ ໒໐໐໔

# ບົທຣາຍງານຂອງ ດຣ. ໄພຍ໌ໂຣຈ

ບົທຣາຍງານຂອງ ດຣ. ໄພຍ໌ໂຣຈ ແມ່ນເອກສາຣບັຣຍາຍກ່ຽວກັບການເປັນມາຂອງຜູ້ນຳປະຕິກາຣຊ້າຍຈັດ ທີ່ເອົາຫົວຢ່າງຕາງຕົນຮັບໃຊ້ນາຍເໜືອຫົວຄື ວຽຕນາມເໜືອ ຂອງມັນແບບກົ່ນເຕີ່ ແລະ ໂງ່ຈ້າລ້າຫລັງແບບບໍ່ມີປັນຍ໌ຍາ.

ຖ້າທ່ານຕ້ອງການຢາກຮູ້ລາວແດງຕື່ມອີກ ເຊີນຍ໌ທ່ານຈອງໄດ້ທີ່ສຳນັກພິມພ໌ ໃນຣາຄາ ໕.໐໐ ດອລລາຣ໌ ແລະ ສົ່ງອີກ ໑.໐໐ ດອລລາຣ໌ ຣວມທັງໝົດເປັນ ໖.໐໐ ດອລລາຣ໌ ຫລັງຈາກທ່ານໄດ້ອ່ານ ແລະ ໃຊ້ເປັນເຄື່ອງອຸປກອຣການຄົ້ນຄວ້າແລ້ວ ທ່ານຈະກຸ້ມຄ່າ ໃຫ້ຄວາມແຈ່ມແຈ້ງແກ່ຊີວິດ ແລ້ວທ່ານຈະກາຍເປັນຄົນລາວທີ່ຮັກຊາດຢ່າງສົມບູຣນ໌ !!

ລາວຮ່ວມເສຣີພາພ
P O BOX 17282
ROCHESTER, NY.14612

# ບັນນາທິການ ໄຂຄວາມ

ທ່ານພີ່ນ້ອງລາວຮ່ວມສາຍເລືອດເກີດ ທີ່ຮັກແພງທັງຫລາຍ; ນາຮອດ ປັຈຈຸບັນນີ້ ປີ ຄຣິດສັງກາສ ໒໐໐໔, ທິສດີການເມືອງ ວຽດ-ລາວ ໄດ້ກາຍເປັນປາກອມປະສາທ ອນາມມີພິສຢ່າງຮ້າຍແຮງ, ຝັງເລິກຢູ່ໃນຂມຂອງຂອງ ບັກ ຊູຄຳທັດ ແລະ ໝູ່ກອງ ພັດ-ພວກຂອງມັນອັນມີ ພັກລັດຜເດັຈການຖຸມອຳນາຈ ຢູ່ວຽງຈັນທນ໌ ເປັນຖານອິງ ປະຕິບັດ ໂທສກັມມ໌ຕໍ່ຊາດຕໍ່ປະຊາຊົນລາວ ຢ່າງປ່າເຖື່ອນທີ່ສູດ. ແຕລະມື້,ໜ້າວຽກຂອງພວກມັນແມ່ນກົ້ມໜ້າກົ້ມຕາເປັນໝາພາລໂຕບອກໄດ້ໃຊ້ນ້ອມຮັບໃຊ້ ຮາໂນ່ຍຢ່າງດຽວ.

ພວກລູກໝາປະຕິກູລທັງຫລາຍ ມັນມີແຕ່ພາກັນຄິດຫາທົນທາງດັບສູນຍ໌ເຊື້ອຊາດລາວຂອງພວກເຮົາຢ່າງບໍ່ລົດລະ. ໃນເວລາທີ່ຊາວເສຣີຊົນໃນຂອບເຂດທົ່ວໂລກພວມມີໄຊຍ໌ຊນະໃນການໂຄ່ນລົ້ມຜເດັຈການຢູ່ລາວກໍຄືຢູ່ນອກປະເທສ ພວກລູກໝາປະຕິກູລທັງຫລາຍກໍຂອດຂຽວຊອກຫາ "ຂບວນລາວເສຣີຊົນ" ບໍ່ເວັ້ນແຕ່ລະວັນ. ຄວາມຄິດ, ຄວາມໄຝ່ຝັນ ຂອງພວກມັນທີ່ຈະດັບສູນຍ໌ການຕໍ່ສູ້ເພື່ອອິສສຣະພາບຂອງຄົນລາວໃຫ້ອພື່ອແມ່ແກວຂອງພວກມັນ ຍ້ອງບໍ່ສໍຣະເສີນ ແມ່ນຖືກ ລາວເສຣີຊົນ ຜູ້ອາຈຫານຊານໄຊຍ໌ ພ້ອມທັງຊາວລາວ ຜູ້ຮັກເຊື້ອແພງຊາດ ປາບມັນໄດ້ຢ່າງທັນກາລ. ໃນສະບັບນີ້, ພວກເຮົາຈະໄດ້ເຜີຍຫລາຍເຫດການທີ່ຜ່ານມາ ແກ່ພີ່ນ້ອງລາວຮ່ວມສາຍເລືອດເກີດ ເພື່ອແກະຂີ້ຫູຂີ້ຕາໃຫ້ຫູຮູ່ງຕາແຈ້ງນຳກັນເພື່ອປະດັບໄວ້ເປັນສະຕິຣະວັງຕົວກໍຄືແສງສວ່າງແຫ່ງປັນຍາປ້ອງກັນບໍ່ໃຫ້ຖືກຕົວະຕົ້ມຕໍ່ໄປອີກ. ນາຍພົລແຈ້ງໄຊຍະວົງສ໌, ນາຍພົລຜູ້ຖືກຫລໍ່ຫລອມມາໂດຍ ວິວັທການແຫ່ງການປະຕິວັດ, ເປັນນາຍພົລຜູ້ບຸກເບີກ ກໍ່ສ້າງ, ຈັດຕັ້ງ ແລະ ນຳພາ ບໍຣິສັທພັທນາເຂດພູດອຍ ເຊິ່ງເປັນທີ່ຮູ້ຈັກກັນດີ ໃນຖານະມະຫາເສດຖີແຈ້ງ ຫຣືວາ ເຈົ້າພໍ່ແຈ້ງທີ່ມີທັງອຳນາຈ ມີທັງເງິນມີທັງອິທທິພົລຊື່ສຽງ. ພາຍຫລັງຫລັກຊາວໄດ້ຖືກພັທນາເປັນບ້ານຮຸ່ງເມືອງຈເຣີນແລ້ວ, ພາຍຫລັງຜູ້ພຽງນາກາຍໄດ້ມີເສັ້ນທາງເຂົ້າສູ່ປ່າຣົກ(ຕໍ່ໜ້າ ໔)

ເທີດທູນຊາດ ເສຣີພາບ ຕລອດການ

ລາວຮ່ວມເສຣີພາບ

LAO UNITED FREEDOM ORGANIZATION

# ນິຕຍະສານ ລາວຮ່ວມເສຣີພາບ ແນວຜົລງານຂອງຊາວໜຸ່ມ ລາວເສຣີຊົນ

ລ.ສ.ພ ປີທີ ໑໗ ສະບັບ ໑໔໖ ອອກເດືອນ ມະກະຣາ–ກຸມພາ, ປີ ໐໔ **L.U.F.O**

## ເຣື່ອງໃນສະບັບ

ໜ້າ:໔ ບັນນາທິການ ໄຂຄວາມ

ໜ້າ:໑໔ ຊຸຄຳທັດ ກວາດລ້າງໝວດຫລັງ ທອງຣິທທິ໌– ວາງ ປາວ

ໜ້າ:໓໓ ກົລອຸບາຍຂາຍຊັ້ນນາຍທະຫານ

ໜ້າ:໓໗ ອັດປະຕູ ກູເອົາເງິນ

ໜ້າ:໔໔ ຄວາມເວົ້າຫວານໆ ນຳຈອງລ້າງຈອງຜານຄົນໂງ່ງ

ໜ້າ:໔໓ Getting to the root of the Problem

**ພິມພ໌ ແລະ ຈຳໜ່າຍ ໂດຍ : ສຳນັກພິມພ໌ ລາວເສຣີຊົນ**

**LUFO'S NEWS & VIEWS**
P.O. Box = 17282
Rochester, NY 14617
**(USA)**

**L.U.F.O**
P.O. Box = 13757
Portland, OR 97213
**(USA)**

**L. U.F.O**
P.O. Box = 8922
Cedar Rapids, IA 52408
**(USA)**

**L. U. F. O of N.E**
P. O. Box = 28341
Providence, RI 02908
**( USA )**

**L.U.F.O**
P.O. Box = 1204
Powder Spring, GA 30127
**(USA)**

**L.U. F.O**
P.O. Box = 38846
Sacramento, CA 95838
**(USA)**

**LAO SERISON**
P.O. Box = 3861
58038, Hagen
**(GERMANY)**

**L.U.F.O**
P.O. Box = 1891
Bridgeport, CT 06610-9998
**(USA)**

**L.U.F.O/LAO SERISON**
P.O. Box = 63
Flemington, VIC 3031
**(AUSTRALIA)**

**XAO NOUM LAO SERISON**
UL. Mlynski 21 / 23
40096 Katowice
**(POLAND)**

**L.U.F.O / LAO SERISON**
Hiratsukashi Yokouchi 3139
Yokouchi Danchi 16-404
KANAGAWAKEN **( JAPAN )**

**L.U.F.O**
**P. O. Box = 4513**
Aurora, IL 60507-4513
**( USA )**

**L.U. F.O**
**P.O. Box = 86164**
Portland, OR 97286
**( USA )**

**L.U.F.O**
**P.O. Box = 1334**
Beaverton, OR 97075
**( USA )**

**L.U.F.O**
**P. O. Box = 3155**
Syward, AK 99664
**( USA )**

**L.U.F.O**
P. O. Box = 618
Losalamitos, CA 90720
**( USA )**

**L. U. F. O**
P. O. Box = 1445
Binghamton, NY 13902
**( USA )**

**L.U. F. O**
P. O. Box = 3292
Rockford, IL 61106
**( U S A )**

**Lao Serison**
2 Villa d'Auvergne
78410 Aubergenville
**( FRANCE)**




(ແກວ-ແມວລາວຍອງຍຫລອກໃຊ້-ຊ້ຳພັດຍ່ຽງຊົມປ່ານວາໄກຕອດອີ່ງ. ມີວເມີນກຳຄຳຍໍຍອງຂອງສັດຣູ ຈີນວ່າປະຣອດນາຍ ແລະ ເພື່ອນຮ່ວມຊາຕຂອງຕົນ; ແລ່ນໄປຮັບໃຊ້ສັດຣູຈີນວ່າສົ່ງເນື້ອປະດາຕົວ ເລີຍໄດ້ກາຍມາເປັນນາຍພົລບໍ່ມີຄ່າຍ ແລະ ຕົກຕ່ຳກວ່າປະຊາຊົນ-ເປັນ ນາຍພົລເສັຍຕົວ ປ່ວງບ້າບໍ່ມີໂຮງໝໍໃດຮັບປົວ )

ດັງຕົບແລ້ວ, ອັນເປັນເງື່ອນໄຂສດວກໃນການຂຸດຄົ້ນເອົາໄມ້ທີ່ເປັນສົມບັຕຮວມຂອງຊາຕອອກຂາຍ. ນາຍພົລແຈ້ງ ຜູ່ໂດ່ງດັ່ງໃນເມື່ອກ່ອນໄດ້ກາຍເປັນ ນາຍໂພນເຈົ້າ ໃນປັຈຈຸບັນ ບໍ່ມີໃຜສົນໃຈຕິດຕໍ່ຄ້າຂາຍນຳອີກແລ້ວ.

ທາງສຽງ ທີ່ບໍ່ມີຫຍັງດີໃຫ້ແກ່ຜູ່ກ່ຽວ ໄດ້ຊອດອອກມາສູ່ໂລກຂ້າງນອກ ເມື່ອຫລານສາວຄົງຂອງເພິ່ນເອງ ທີ່ຕັ້ງຖິ່ນຖານຢູ່ອອສເຕຣເລັຍ ໄດ້ໃຂຄວາມລັບວ່າ: "ພໍ່ອາວແຈ້ງຂອງຂ້ອຍໄດ້ສົ້ນເນື້ອປະດາຕົວແລ້ວ ເພິ່ນກໍຈວນຈະເອົາຕົວບໍ່ລອດ ຊະນາມືວ ຂ້ອຍເອົາເງິນເມືອລ້ຽງທົນນຳເພິ່ນແມ່ນຖົ່ມລ້າງ". ອີກແຫລ່ງຂ່າວໜຶ່ງແມ່ນ ຈເຣີນ ໄຊຍະກຸມມາຣ ຄົນທ້ອງຖິ່ນດຽວກັບທ່ານສະຫາຍແຈ້ງ ໄດ້ເປີດເຜີຍວ່າ: "ດຽວນີ້, (ຕໍ່ ໜ້າ ໕)

ທ່ານແຈ້ງ ແລະ ຄນະໄດ້ເບິດນ້ຳປ່າແລ້ວ, ພວກເພິ່ນໄດ້ກາຍມາເປັນກຸ່ມມາເຟຍລາວ ທີ່ໜ້າຢ້ານທີ່ສຸດແກ່ພັກລັດ, ການສຳປະທານຂຸດຄົ້ນໄມ້ ເພື່ອນຳມາກໍ່ສ້າງບ້ານເຮືອນໃຫ້ແກ່ຊາວຕ່າງຊາດ ເຂົ້າໄປເຮັດທຸຣະກິຈເຂື່ອນນ້ຳເທີນ, ຄນະຂອງ ທ່ານສະຫາຍແຈ້ງກໍບໍ່ໄດ້ຮັບອະນຸຍາດ ໃຫ້ດຳເນີນໂຄງການ, ພັກລັດ ມີຄວາມຣະແວງ ທ່ານແຈ້ງ ຊິກອບໂກຍ ເອົາໄມ້ເກີນໂຄຕ້າ" ລູກນ້ອງຂອງ ທ່ານແຈ້ງ ຍັງຂື່ມຂູ່ ຈເຣີນ ໄຊຍະກຸມ-ມາຣ ອີກໃນເວລາເຂົ້າຮ່ວມແຂວງຂັນປະຊຸມໂຄງການ ວ່າ: "ມຶງຢູ່ຕ່າງປະເທສແລ້ວຊິກຕາຍມາຫຍຸ້ງກ່ຽວ ກັບວຽກພາຍໃນເຮັດຫຍັງ?".

ຄວາມຈິງ, ເມື່ອ ທ່ານນາຍພົລ ແຈ້ງ ແລະ ຄນະ ໄດ້ມີຄວາມສລາດສລຽວ, ມີບົທຮຽນຮູ້ແຈ້ງເຫັນຈິງວ່າແກວພວມເອົາປຽບລາວໃນການຂຸດຄົ້ນໄມ້,ແກວໄດ້ປັດເຂັ່ຍ ຄນະຂອງເພິ່ນອອກຊ່ວງ ເພື່ອຈະໄດ້ເອົາຈຳພວກຄົນໂງ່ງເຫງົາກຶງຫງາກງຂຶ້ນມາກຳແໜ ເພື່ອແກວຈະໄດ້ຫລັກໂລພກິນສບາຍໆ.

ກໍຣະນີ ປົດທ່ານໜູນແກ້ວ ອໍຣະບູນ ອອກຈາກຕຳແໜ່ງເຈົ້າແຂວງວຽງຈັນໜໍກໍເໝືອນກັນ. ຍ້ອນທ່ານ ໜູແກ້ວ ເປັນລູກຫລານຂອງລາວອິສສຣະ ຜູ້ຮັກຊາດ ແລະ ພຣະອາຈານ ບໍ່ຍອມກົ້ມຫົວເຮັດຕາມຄຳສັ່ງຂອງແກວລູກລູກ ຈຶ່ງຖືກປົດ ແລະ ແກວຊ້ຳພັດຂົ່ມບັງເອົາໜໍ່ ສີໂຫ ບັນນູວົງສ໌ ຂຶ້ນເປັນເຈົ້າແຂວງແທນ. ບໍ່ຍ້ອນວ່າໄດ້ກຳອຳນາຈປົບ, ໜໍ່ສີໂຫ ກໍຈັດການ"ແດກ" ຢ່າງໃຫຍ່ເລີຍ. ມັນບໍ່ແມ່ນການກອບໂກຍ ສໍ້ຣາຊບັງຣາສ ສໍ້ຣາສບັງຫລວງ ທຳມະດາ ແຕ່ເປັນການແດກ ຢ່າງສູ-ດັບຕັບໄຫມ້.

ພີ້ນອງປອງປາຍ ຂອງໜໍ່ ທີ່ບໍ່ມີຄວາມຮູ້ຄວາມຫລັກຫຍັງໄຖນາຢູ່ ກໍແກ່ລາກດຶງກັນມາກຳອຳນາຈເປັນຣະດັບຫົວໜ້າດວຍ. ອັນທີ່ເປັນຕາໜ້າໜ່າຍຫລາຍແມ່ນການຂໍອະນຸຍາດ ເຮັດທຸຣະກິຈການຄ້າ ໜໍ່ສີໂຫຈະອະນຸຍາດໃຫ້ແຕ່ຈຳເພາະ ຍາດພີ້ນອງຂອງຕົນທໍ່ນັ້ນ.

ໜໍ່ ສົມຈິດ ສີຄຳແພງ ລູກນ້ອງເກົ່າ ຂອງທ່ານ ໜູນແກ້ວ ມາໄດ້ນາຍໃຫມ່ ຄືໜໍ່ ສີໂຫ ຜັດແຍງຂຶ້ນໂກຂຶ້ນໂມປາບຊາວບ້ານ ຈົນບໍ່ມີໃຜຂ້ອໄດ້.

ການປົກຄອງແບບຂີ້ຂ້າຫົວເມືອງຂຶ້ນ ແລະ ຄວາມປະພຶດແບບຜເດັຈການ ແມ່ນວິທີ ຂ້າລາວທຳລາຍລາວດັບສູນຍ໌ລາວທີ່ແກວນຳມາໃຊ້ຢູ່ ສປປລາວ ຢ່າງມີຜົລດີ.

ຜູ່ໃດມີຄວາມຮັກຊາດ ມີສະຕິຊາດ ປາຖນາໃຫ້ລາວ ຈເຣີນຮຸ່ງເຮືອງ ມີເອກຣາຊ ມີອິສສຣະພາພໂດຍແທ້ຈິງ ແມ່ນຈະຖືກກົ່ນແກ້ງ ປັດເຂັ່ຍອອກຈາກຕຳແໜ່ງໜ້າທີ່ຮັບຜິດຊອບໂດຍໄວໆໂດຍຈຳເພາະແມ່ນສາຍເລືອດ ແລະ ຜູ້ສືບມູລເຊື້ອ ລາວອິສສຣະ (ຕໍ່ໜ້າ໖)

ຈະໄດ້ຮັບຄວາມເຈັບປວດຫລາຍ.

ທ່ານພີ່ນ້ອງລາວທີ່ຮັກແພງ ລາວເໜືອ ລາວກາງ ລາວໃຕ້ ລາວທົ່ງ ລາວດົງ ລາວປ່າ ກໍດີພວກເຮົາລ້ວນເປັນໄທລາວນຳກັນ. ແຜ່ນດິນທີ່ເປັນ ສປປ-ລາວນັ້ນ ກໍແມ່ນປ່ຽນແຕ່ຊື່ມາຈາກ ພຣະຣາຊອານາ-ຈັກຣ໌ລາວ. ພຣະຣາຊອານາຈັກຣ໌ລາວ ແມ່ນກອງກະ-ດູກ ແລະ ຢາດເລືອດ ຂອງວິຣະຊົນ ລາວອິສສຣະ ຍາດເອົາຈາກເງື້ອມມືຂອງສຍາມ ແລະ ຈັກກະພັດ-ຝຣັ່ງເສສ. ເຮົາເອີ້ນແຜ່ນດິນເກີດຕອນນີ້ປະເທສລາວ ເພື່ອເປັນກຽດແກ່ທຸກໆຊັ້ນຄົນ ທຸກໆເຜົ່າຊົນ ທີ່ມີສຳນຶກວ່າຕົນເປັນລາວ ແລະ ກໍໄດ້ເຮັດທຸກຢ່າງເພື່ອປົກປັກ ສາ ອະທິປະໄຕຍ໌ ຂອງຊາດຕົນ ຈາກພໍ່ຫາລູກຜ່ານການເວລາອັນຍາວນານດ້ວຍຄວາມທະນົງອົງອາຈ ບໍ່ຍອມຈຳນົນ.

ພວກເຮົາໄດ້ເວົ້າຢ້ຳຫລາຍເທື່ອກ່ຽວກັບຂໍ້ຜູກ-ພັນທ໌ຂອງ ລາວອິສສຣະ ມີຕໍ່ປະເທສລາວ ແລະ ແຜ່ນ-ດິນຕອນນີ້ກໍໄດ້ຜ່ານຜ່ານາໆອຸປສັກມາຫລາຍຄັ້ງຫລາຍຫົນຢ່າງທໍຣະຣົດ.

ວັນທີ ໑໒ ຕຸລາ ຄ.ສ. ໑໙໔໕ ແມ່ນມື້ທີ່ຄົນລາວຜູ້ທະນົງອົງອາຈ ປະກາສຕົນເປັນ ອິສສຣະ ທ້າ-ທາຍບັນດາຈັກກະພັດ ແລະ ອິທທິກຳລັງທ້ອງຖິ່ນທີ່ຫວັງລົບກືນ ຄວາມເປັນລາວຂອງຄົນລາວໂດຍຊອບທັມມ໌.

ແຕ່ນັ້ນມາ, ປະເທສລາວໄດ້ຖືກນຳພາ, ຮັກສາ,



ຕາບອດ ຈູງ ຕາບອດ ມັນຈະໄປຮອດໃສ?

ປົກຄອງໂດຍອັນທີ່ພວກເຮົາເອີ້ນວ່າ ຣັຖບານ. ມີຣັຖ-ບານ ລາວອິສສຣະ, ຣັຖບານແຫ່ງ ພຣະຣາຊອານາ-ຈັກຣ໌ລາວ, ຣັຖບານເປັນກາງ, ຣັຖບານປະສົມ, ຣັຖ-ບານ ຄອມມູຍນິສຕ໌ເປັນຕົ້ນ.

ແກວໄດ້ຫັນໃຊ້ ເຈົ້ານາຍຜູ້ມີ ອິທທິພົລ ໃນອັນທີ່ເອີ້ນວ່າຝ່າຍຂວາ ເພື່ອທຳລາຍ ຣັຖບານລາວອິສສຣະ ອັນເປັນຣັຖບານຂອງປະຊາຊົນລາວ ເພື່ອປະຊາຊົນລາວແທ້ໆ. ແກວໄດ້ຊົມໃຊ້ມືຂອງຄົນຜູ້ມີອິທທິພົລ ແລະ ອຳ-ນາຈໃນຄນະ ຣັຖບານ ເພື່ອທຳລາຍ ຣັຖບານແຫ່ງ ພຣະຣາຊອານາຈັກຣ໌ລາວ. ຣັຖບານຊຸດໃດ(ຕໍ່ໜ້າ ກ)

ກິນບ້ານກິນເມືອງ ຂົ່ມເຫງເຕັງເຕັກປະຊາຊົນ ແລະ ເປັນຂີ້ຂ້ອຍແກວ, ຣັຖບານ ຊຸດນັ້ນໄດ້ກຸມອຳນາຈເຫິງ ແລະ ກໍມີແຕ່ບັກຫົວແກວ-ແຂວລາວໜັ້ນ ມີສົມສົນມີກິນ ມີໃຊ້ຢ່າງເຫລືອເຟືອ ເພາະ ນາຍຂອງມັນຕ້ອງລ້ຽງ ໃຫ້ມັນເຫລືອ ເກືອໃຫ້ມັນມູກພີດີງາມເພື່ອຈະໄດ້ເປັນ ໝາພາລຮັບໃຊ້ ທຳລາຍຊາຕລາວຂອງຄົນລາວໂດຍ ໄວໆ. ແຕ່ປີ ຄ.ສ. ໑໙໗໕ ຫາ ໒໐໐໔, ເມືອງ ລາວ ຢູ່ໃຕ້ອຳນາຈຜເດັດການຂອງພວກຂີ້ຂ້າໝາພາລ ຮັບໃຊ້ຮາໂນ້ຍ ແມ່ນບໍ່ມີຄວາມກ້າວໜ້າຫຍັງໝົດ ມີ ແຕ່ຫຼຸກຂີ້ຈົມລ້າຫລັງລົງທຸກໄຊ້. ເງິນເດືອນພນັກງານ ທະຫານ ຕຳຣວຈ ກໍຄືພວກຣັຖກາຣຫລວງ ສອງ ເດືອນສາມເດືອນ ລາງບ່ອນ ຫົກເດືອນຈິ່ງໄດ້ຮັບເງິນ ເດືອນບໍ່ພໍກຸ້ມກິນຊ້ຳພັດຍັງເບີ້ກຊ້າອີກ ຣະບົບຄຸ້ມຄອງ ຣັຖ-ຄຸ້ມຄອງສັງຄົມ ແມ່ນຊຸດໂຊມໜັກ. ອັນທີ່ນັ້ນເດັ່ນ ແມ່ນແກວໄດ້ເອົາໃຈໃສ່ບັງຄັບທັງທາງກົງ ແລະ ທາງ ອ້ອມໃຫ້ບັນດາ ໕໖ ສຫາຍທີ່ເອີ້ນໂຕເອງວ່າຄນະພັກ ຣ່ຳຮຽນແນວທາງການເມືອງວຽດ-ລາວ ໃຫ້ຝັງເລິກຢູ່ ໃນຂມອງຢ່າງລະອຽດລະອໍ ແລະ ຈົບຖ້ວນ; ແລ້ວນຳ ສູ່ພາຄປະຕິບັດໃຫ້ເຖິງຖອງ ເຊັ່ນວ່າ: ການເມືອງສາ ສາກົລ ຕ້ອງເປັນໃຈ ພວກກໍ່ການຮ້າຍສາກົລໂຈມຕີຈັກກ ກະພັດ ອາເມຣິກາ ຕ່າງໆ. ຄວາມເວົ້າຢູ່ກອງປະຊຸມ ນາງຊາຕ ກໍຄືກອງປະຊຸມຣະດັບທ້ອງຖິ່ນ ວ່າເຫັນດີນຳ ການປາບປາມພວກກໍ່ການຮ້າຍ ແຕ່ພາຄໂຕຈິງ ປະຊາ-ຊົນລາວຢູ່ພາຍໃນປະເທສຖືກອັດຫູບັງຕາ ແລະ ຫລອກ ລວງວ່າ ອາເມຣິກາ ຮຸກຮານປະເທສ ອີຣັກ. ເຄື່ອນ ໄຫວ ຫລອກລວງຕົບຕາຊາວໂລກ, ເຄື່ອນໄຫວທັບມ້າງ ທຳລາຍການຈັດຕັ້ງຂອງຄົນລາວໃນຕ່າງປະເທສ, ເຄື່ອນ ໄຫວການເມືອງດັບມອດຄວາມເປັນລາວຂອງຄົນລາວໃຫ້ ສຳເຣັຈໄວໆ.

ມາຮອດປີ ໒໐໐໔ ນີ້ການພາຄພຽຣກົນລາວໂດຍ ແກວແມ່ນປາກົຕແຈ້ງອອກກວ່າແຕ່ກ່ອນຫລາຍທີ່ສຸດ.

ສິ່ງທີ່ແກວ ສາມາຖທຳລາຍໄດ້ມີການສຶກສາ, ສາ ສນາ, ສັງຄົມຮີດຄອງອັນດີງາມ ແລະ ຣະບົບເສຖກິຈ ແມ່ນມຸ່ນຊຸ່ຍປຸ່ຍໝົດ.

ສິ່ງທີ່ແກວ ບໍ່ທຳລາຍມີແຕ່ວ່າສົ່ງເສີມໃຫ້ພວກພູມ ຂັ້ນເລື້ອຍໆ ແມ່ນຄວາມຂີ້ຄ້ານມັກງ່າຍ, ຂີ້ແບະແງະ-ງອມ, ການຫລິ້ນກິນຟູມເຟືອຍ, ການທຳຊົ່ວອະນາຈານ, ຄວາມປະພຶຕຈອງຫອງຜເດັດການ, ໃຈນ້ອຍຄຽດໄວ, ອິດສາບັງບຽດກັນດັ່ງນີ້ເປັນຕົ້ນ.

ແຕ່ວ່າ ມາຮອດເດືອນ ມະກະຣາ ໒໐໐໔ ນີ້ ແກວ ຊ້ຳພັດມີບັນຫາ ກະວົນກະວາຍຫລາຍ ເມື່ອແມນ-ເຫັນ ຄວາມສາມັຄຄີຂອງຄົນລາວ ໂດຍຈຳເພາະແມ່ນ ຂບວນການກູ້ ອິສສຣະພາບລາວໄດ້ມີຄວາມສມັກສມານ ກັນແໜ້ນແຟ້ນຫລາຍ. (ອ່ານຕໍ່ໜ້າ ໘)

ແກວໄດ້ສົ່ງລູກນ້ອງຂອງມັນໂຕນ້ອຍໄດ້ໃຊ້ນ້ອມມາ ວໍຊິງ ຕັນດີຊີ ຫລາຍຖ້ຽວ ເພື່ອມີຂຂາບຂໍໃຫ້ ຈັກຣະພັດ ອາເມຣິກາ ທີ່ມັນຢ່ອຍດາບໍ່ເຫືອດສົບ, ໃຂການຄ້າຂາຍ ເສຣີກັບ ສປປລາວ. ຄວາມຈິງ ຢູ່ເມືອງລາວ ບໍ່ມີສິນ ຄ້າຫຍັງພໍຊິນຳມາຂາຍຢູ່ ສຫະຣັຖ. ແຕ່ ແກວ ບັງຄັບ ສປປລາວ ມາມີຂຂາບເພື່ອຢາກໄດ້ໂຄຕາແລ້ວຈະໄດ້ເອົາ ເອົາສິນຄ້າຂອງແກວອອກຂາຍໃນນາມ ລາວເຊັ່ນ. ຖ້າ ຫາກພວກແກວ ແລະ ລູກນ້ອງຜເດັຈການ ກຸມອຳນາຈ ໃນລາວ ໄດ້ສຳເຣັຈສົມປະສົງຄ໌ ຄືຄວາມຄິດ ຣະບົບ ເສຖກິຈຂອງລາວນັບມື້ຈະຊຸດໂຊມລົງໜັກ ແລະ ຫມາ- ພາລຂອງແກວ ທີ່ມັນຂີຣົງມີເນື້ອບຽງອື່ນ. ພີ່ນ້ອງລາວຢູ່ ພາຍໃນປະເທສ ເພິ່ນສາມາຖຮູ້ແຜນການອັນສົກປົກນີ້ຈຶ່ງ ໄດ້ພ້ອມພັນທ໌ອອກມາຫາພີ່ນ້ອງລາວໃນຕ່າງປະເທສ ຮ່ວມ ມືກັນຕໍ່ຕ້ານຢ່າງມີໄຊຍ໌ຊນະ. ສົມສວາທ ເລັ່ງສວັສດິ໌ ແລະ ຄນະ ຕ້ອງກົ້ມໜ້າກັບຄືນວຽງຈັນໝົດເປົ່າຢ່າງ ອັບອາຍຂາຍໜ້າຫລາຍຄັ້ງ. (ເອີ! ຖ້າຢາກມີການພົວ ພັນທ໌ດ້ານການຄ້າກັບ ຈັກຣະພັດ ອາເມຣິກາອີກຫລືໃຫ້ ຢຸດເຊົາສນັບສນູນ ພວກກໍ່ການຮ້າຍສາໄວໆເນີ). ອັນ- ນີ້, ແມ່ນໄຊຍ໌ຊນະ ຂອງພີ່ນ້ອງລາວຜູ້ຮັກຊາຕ ໃນຕ່າງ ແດນ ພວກເພິ່ນໄດ້ພາກັນເຮັດການເມືອງ ຈຶ່ງສາມາຖ ຍາດໄດ້ໄຊຍ໌ຊນະ. ບໍ່ແມ່ນຫລິ້ນການເມືອງ.

ເຖິງແມ່ນວ່າ ຊາວລາວຜູ້ຮັກຊາຕ ໄດ້ສາມັຄຄີຍ໌ ກັນແໜ້ນໜາໄດ້ໄຊຍ໌ຊນະກໍດີແລ້ວ ແກວຈະບໍ່ຢຸດເຊົາ ໃນການບຽດບີດ ແລະ ໃຊ້ຫູກເລ່ທ໌ຫລ່ຽມ ຍຸທໂທບາຍ ເພື່ອເອົາປຽບລາວ, ກິນລາວ ແລະ ດັບສູນຍ໌ລາວໃນທີ່ ສຸດ. ພໍ່ລາວແມ່ລາວ ໄດ້ຕ້ານຍັນການບຽດບີດຂອງແກວ ມາແຕ່ປີ ເຈົ້າພໍ່ ຂຸນບໍຣົມ ຕໍ່ໃສ່ຍຸຄຂອງສົມເດັຈພຣະ ເຈົ້າຟ້າງູ່ມ ມຫາຣາຊເທົ່າຮອດ ປັຈຈຸບັນ. ອັນນີ້, ຂໍ ໃຫ້ພີ່ນ້ອງລາວຮ່ວມສາຍເລືອດເກີດ ຢ່າໄດ້ຫລົງລືມ.

ແກວຈະເຮັດທຸກຢ່າງເພື່ອດັບສູນຍ໌ລາວໃຫ້ເມີດ ໄວໆ. ບຽດບີດທາງທະຫາຣກໍມີ, ບຽດບີດທາງການ- ເມືອງກໍມີ, ບຽດບີດທາງດ້ານແຂກອົບພະຍົບເຂົ້າມາຕັ້ງຖິ່ນ- ຖານກໍມີ, ບຽດບີດທາງດ້ານກຽວດອງກໍມີ. ອັນສຳຄັນ ທີ່ສຸດແມ່ນການພົວພັນທ໌ແບບພິເສສ ວຽຕລາວ-ລາວວຽຕ ນີ້ແມ່ນອັນຕຣາຍຕົ້ນຕໍ. ດຽວນີ້, ສຖານທູຕລາວ-ວຽຕ ນາມ ພວມອອກເຄື່ອນໄຫວສັກເລຂ ຫຣືວ່າ ຂື້ນສຳມະ- ໂນຄົນລາວຢູ່ນອກປະເທສວ່າມີຈຳນວນຫລາຍປານໃດ? ໃຫ້ພີ່ນ້ອງເຮົາ ມີສະຕິລະວັງຕົວສູງ ຢູ່ປະເທສ ອອສ- ເຕຣເລັຍ ແມ່ນບັກ ວິໂຣຈ ສູນຍ໌ດາຣາ ເດັກນ້ອຍບ້ານ ວັດສົບສວນມອນ ນຄອຣວຽງຈັນໝົ ເປັນໂຕການ ອອກ ຄວ່າຈິດສຳມະໂນ ສຳຣວຈຄົນລາວ. ຢູ່ ອາເມຣິກາ ແມ່ນ ໝໍ ສວ່າງ ຈັນເທພາ, ໝໍ ຈັນໂທ ສູຣິໂຍ, ໝໍ ພວງພັນ ຊນະນິກອຣ, ໝໍ ສູວັນນະຣາຊ ຈິນດາ- ວົງສ໌ ແລະ ໝໍ ສູຣິວັນ ຄຳວົງສ໌ໄຊຍ໌ (ຕໍ່ໜ້າ ໙)

ພ້ອມທັງຄະນະພັຄພວກຫລາຍບັກ ພ້ອມຕິດຕາມເບິ່ງຂບວນກູ້ຊາຕລາວຢ່າງຕາຕີ່ຕາລາມ. ຢູ່ປະເທສ ຝຣັ່ງ ແມ່ນທ່ານ ອັກຄະວົງສ໌ ພິມັງ ແລະ ພັລຍາ ອື່ອັ້ນ, ທ່ານ ແສງທອງ ສູດມະນີວົງສ໌, ບັກ ຂັນຕິ ພະຈັນສີສຸຣາຊ, ບັກສົມພອຣ ສີຈະເລີນ, ບັກ ດຣ. ອານິນ ສັກດີ່ປະເສີຖ, ບັກ ດຣ. ແສງເພັຊຣ໌ ອຳພອນສິລ, ບັກ ສູວັນທອນປະຊາສຸຂ, ບັກ ລີ ຫູ ເຢີ ແລະ ຄນະອີກ ຊາວ ກວ່າບັກ ພວມພະຍາຍາມທັບນ້າງ ຂບວນການກອບກູ້ ອິສສຣະພາພລາວຊອຍ ພັກລັດ ຢ່າງຕັ້ງໜ້າຕັ້ງຕາ.ບັນດາ


* ທ່ານ ອັກຄະວົງສ໌ ພິມັງ ແລະ ອື່ອັ້ນພັລຍາຂອງ ຜູ້ກຽວແມ່ນແມວນອງ ຂອງພັກລັດປະຈຳຝຣັ່ງ ໂຕ ລ້າຍກາດ

ນັກອິນທຣີ, ນັກຕັນຊິວ ທັງຫລາຍໃຫ້ພາກັນແມນມັນ. ຂອບໃຈພວກທ່ານຫລາຍໆທີ່ສົ່ງຣາຍງານສພາພການມາໃຫ້ ແລະ ກໍຣອດສຳນັກງານສູນຍ໌ກາງທຸກໆຢ່າງ.

ເພື່ອສ້າງຜົລງານໃຫ້ແກ່ນາຍຂອງພວກມັນ ບັກອູຄຳທັດ ແລະ ຄນະ ຄຳໄຕ-ບຸນຍ໌ຍັງ ໄດ້ຈັດສົ່ງກຳລັງປະກອບອາວຸທຂອງພວກມັນມາປ່ອນໂຕເປັນກຳລັງກູ້ຊາຕອົ້ນກັບແມວໂຮມ ຢູ່ທົ່ວພາຄອີສານ ມີຈຳນວນຮອດ ໑໔໖໕ ບັກ ເພື່ອມາກວາດລ້າງຈັບກຸມເອົາລູກນ້ອງຂອງນາຍພົລ ທອງຣິທທິ໌-ວາງ ປາວ ທີ່ຫລົບລີ້ຢູ່ຕາມ ອຳເພີຕ່າງໆ. ພວກທີ່ອອນເຫງົາທາງກໍບໍ່ສາມາຖຈຳແນກມິຕຈຳແນກສັຕຣູກໍອອກມາໃຫ້ລູກນ້ອງ ບັກ ອູຄຳທັດ ຈັບແລະ ຍິງຕາຍເປັນຈຳນວນຫລວງຫລາຍ. ແຕ່ເດືອນພຶສຈິກາ ໒໐໐໓ ຫາ ເດືອນ ກຸມພາ ໒໐໐໔, ຄົນແມວໂຮມມີຮອດ ໖໔ ຄົນ ແລະ ຄົນຂອງຂບວນກອບກູ້ອິສສຣະພາພລາວສາຍອື່ນໆມີຮອດ ໑໕໕ ຄົນໄດ້ຖືກລູກນ້ອງຂອງບັກ ອູຄຳທັດ ຂ້າຕາຍ ແລະ ຈັບເປັນຢູ່ທົ່ວພາຄອີສານ.

ສູ້ມັນ, ນັກກອບກູ້ ອິສສຣະພາພລາວ ຜູ້ທີ່ຮູ້ການເມືອງ ເຂົ້າໃຈການເມືອງເອັດການເມືອງ, ຮູ້ຈັກວິທີ-ຫລົບຫລີກ ແລະ ຕອບໂຕ້ການເມືອງວຽຕລາວ ພວກເພິ່ນໄດ້ມີຄວາມປອດໄພຍ໌ ແລະ ທະນົງອົງອາຈຫລາຍທີ່ສຸດທີ່ໄດ້ກາຍມາເປັນ ຜູ້ມີກຽຕອັນສງ່າງາມສືບທອດແລະເສີມຂຍາຍມູລເຊື້ອອັນພິຣະອາຈຫານຂອງເສຣີຊົນຮຸ່ນກ່ອນ; ກໍ່ຄືມູລເຊື້ອແຫ່ງການກອບກູ້ອິສສຣະພາພລາວແລະ ການລຸກຮືຂຶ້ນຕໍ່ຕ້ານປັນ ບໍ່ຍອມກົ້ມຫົວຮັບໃຊ້ແກວມີ:ພະນະທ່ານເສຣີຊົນ ອູນ ອຸນະນີກອຣ, ພະນະທ່ານເສຣີຊົນ ພູມີ ທ່ານສວັນ, ພະນະທ່ານ(ຕໍ່ໜ້າ ໑໐)

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ

ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່

ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່

ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ